# ພຣະຄຳພີມໍມອນ





ພຣະບິດາເທິງສະຫວັນຂອງທ່ານຮັກທ່ານ ແລະ ປາກໃຫ້ທ່ານມີຄວາມສຸກໃນວັນນີ້ ແລະ ຕະຫລອດໄປ. ພຣະອົງໄດ້ມອບຄຳແນະນຳ ແລະ ພຣະບັນຍັດເພື່ອຊ່ອຍທ່ານຜ່ານສາດສະດາຂອງພຣະອົງ. ພຣະບັນຍັດຂໍ້ໜຶ່ງ ທີ່ສຳຄັນຫລາຍຕໍ່ຄວາມສະຫງົບ ແລະ ຄວາມສຸກຂອງທ່ານແມ່ນພຣະບັນຍັດຂອງພຣະອົງທີ່ກ່ຽວພັນກັບຄວາມບໍລິສຸດທາງເພດ, ເຊິ່ງຮູ້ຈັກກັນວ່າກົດພົມມະຈັນ. ພຣະຜູ້ເປັນເຈົ້າໄດ້ຕັ້ງກົດນີ້ໄວ້ນັບແຕ່ຕອນຕົ້ນ, ແລະ ພຣະອົງໄດ້ເນັ້ນເຖິງຄວາມສຳຄັນແກ່ສາດສະດາໂຢເຊັບ ສະມິດ ວ່າມັນເປັນສ່ວນໜຶ່ງຂອງການຟື້ນຟູພຣະກິດຕິຄຸນຂອງພຣະເຢຊູຄຣິດ. ການເຊື່ອຟັງຕໍ່ພຣະບັນຍັດຂໍ້ນີ້ເປັນສິ່ງໜຶ່ງທີ່ຈະຕ້ອງກະທຳຕາມ ກ່ອນຈະສາມາດຮັບບັບຕິສະມາໄດ້ ໃນສາດສະໜາຈັກຂອງພຣະເຢຊູຄຣິດແຫ່ງສິດທິຊົນຍຸກສຸດທ້າຍ.

# ກົດພົມມະຈັນຄືຫຍັງ?

ການສຳພັນທາງເພດລະຫວ່າງສາມີພັນລະຍາເປັນພາກສ່ວນໜຶ່ງທີ່ສວຍງາມ ແລະ ສັກສິດໃນແຜນຂອງພະເຈົ້າສຳລັບລູກໆຂອງພະອົງ.

*ກົດພົມມະຈັນ ຮຽກຮ້ອງໃຫ້ຮັກສາການສຳພັນທາງເພດໄວ້ເພື່ອການແຕ່ງງານລະຫວ່າງຊາຍ ແລະ ຍິງ.*

ມັນເປັນການສະແດງອອກເຖິງຄວາມຮັກພາຍໃນການແຕ່ງງານ ແລະ ອະນຸຍາດໃຫ້ສາມີພັນລະຍາມີສ່ວນຮ່ວມໃນການສ້າງມະນຸດ. ພະເຈົ້າໄດ້ບັນຊາວ່າ ໃຫ້ໃຊ້ອຳນາດທີ່ສັກສິດນີ້ ລະຫວ່າງຊາຍ ແລະ ຍິງທີ່ໄດ້ແຕ່ງງານກັນຢ່າງຖືກຕ້ອງຕາມກົດໝາຍເທົ່ານັ້ນ. ກົດພົມມະຈັນແມ່ນກ່ຽວຂ້ອງກັບທັງຊາຍ ແລະ ຍິງ. ເຂົາເຈົ້າຈະຕ້ອງຫລີກເວັ້ນຈາກການຮ່ວມເພດກ່ອນແຕ່ງງານ ແລະ ຈະຕ້ອງຊື່ສັດ ແລະ ຈິງຮັກພັກດີຕໍ່ກັນຫລັງຈາກແຕ່ງງານແລ້ວ.

ນອກເໜືອໄປຈາກການຮັກສາການຮ່ວມເພດໄວ້ສຳລັບການແຕ່ງງານແລ້ວ, ເຮົາຈະຕ້ອງເຊື່ອຟັງກົດພົມມະຈັນນຳອີກໂດຍການຄວບຄຸມຄວາມຄິດ, ຄຳເວົ້າ, ແລະ ການກະທຳ. ພະເຢຊູຄິດໄດ້ສອນວ່າ, "ພວກທ່ານເຄີຍໄດ້ຍິນຄຳທີ່ມີກ່າວໄວ້ວ່າ ຢ່າຫລິ້ນຊູ້ສູ່ຜົວເມຍທ່ານ. ແຕ່ຝ່າຍເຮົາບອກພວກທ່ານວ່າ, ຜູ້ໃດຜູ້ໜຶ່ງທີ່ແນມເບິ່ງຜູ້ຍິງດ້ວຍໃຈກຳໜັດ ລາວກໍຫລິ້ນຊູ້ໃນໃຈກັບຍິງນັ້ນແລ້ວ.





## *ເປັນຫຍັງເຮົາຈຶ່ງຄວນຮັກສາກົດພົມມະຈັນ?*

ພະບິດາເທິງສະຫວັນຂອງທ່ານໄດ້ມອບກົດພົມມະຈັນໃຫ້ທ່ານເພື່ອປົກປ້ອງ ແລະ ເປັນພອນ. ເໝືອນດັ່ງສິ່ງສັກສິດທັງໝົດ, ການສຳພັນທາງຮ່າງກາຍຈະຕ້ອງເຮັດຕາມຊ່ອງທາງຂອງພະເຈົ້າ. ເມື່ອທ່ານຮັກສາກົດພົມມະຈັນ, ທ່ານຈະຊື່ນຊົມກັບຄວາມສຸກ, ຄວາມສະຫງົບ, ແລະ ການນັບຖືຕົວເອງ. ທ່ານຈະຊື່ນຊົມກັບຄວາມໄວ້ວາງໃຈ ແລະ ຄວາມເຊື່ອໝັ້ນໃນຄວາມສຳພັນຂອງຄອບຄົວທ່ານ, ແລະ ທ່ານຈະໄດ້ຮັບພອນດ້ວຍການຮູ້ຈັກບັງຄັບຕົວເອງ. ທ່ານຈະຊື່ນຊົມພອນແຫ່ງພະກິດຕິຄຸນຂອງພະເຢຊູຄຣິດຜ່ານອິດທິພົນຂອງພະວິນຍານບໍລິສຸດ.

*ເມື່ອທ່ານດຳລົງຊີວິດຕາມກົດພົມມະຈັນ, ທ່ານຈະ:*

- *ເຊື້ອເຊີນພະວິນຍານບໍລິສຸດໃຫ້ມາສະຖິດຢູ່ໃນຊີວິດຂອງທ່ານ.*
- *ມີຄວາມນັບຖືຕົວເອງຫລາຍຂຶ້ນ ເມື່ອທ່ານຮູ້ຈັກບັງຄັບຕົວເອງ.*
- *ມີຄວາມເຊື່ອໝັ້ນຫລາຍຂຶ້ນໃນຄວາມສຳພັນຂອງທ່ານ.*
- *ມີຄວາມຮັກຕໍ່ຜູ້ທີ່ຢູ່ອ້ອມຮອບທ່ານຫລາຍຂຶ້ນ.*

ຊາຕານໄດ້ຍົວະຍົງຜູ້ຄົນໃຫ້ເຊື່ອວ່າ ການຮ່ວມເພດນອກການແຕ່ງງານເປັນສິ່ງທີ່ຜູ້ຄົນຮັບຮູ້ກັນ ແລະ ເປັນສິ່ງທີ່ເພິ່ງປາດຖະໜາ. ແຕ່ມັນເປັນບາບອັນຮ້າຍແຮງ; ພະເຈົ້າໄດ້ສອນລູກໆຂອງພະອົງສະເໝີໃຫ້ມີຄຸນນະທຳ ແລະ ບໍລິສຸດ (ເບິ່ງ ອົບພະຍົບ 20:14 ແລະ ແອລະມາ 39:3–5). ຫລັກທຳຂໍ້ນີ້ແມ່ນນິລັນດອນ.

ການຝ່າຝືນຕໍ່ກົດພົມມະຈັນເປັນການໃຊ້ອຳນາດຂອງພະເຈົ້າທີ່ໄດ້ມອບໃຫ້ເພື່ອສ້າງມະນຸດໃນທາງທີ່ຜິດ; ມັນເປັນການບໍ່ນັບຖືພະອົງ ແລະ ລູກໆຂອງພະອົງ. ມັນເຮັດໃຫ້ວິນຍານເສົ້າໝອງ ແລະ ສ່ວນຫລາຍຈະ ນຳໄປສູ່ຄວາມ

ຂົມຂື່ນ, ເຈັບປວດໃຈ, ຢ່າຮ້າງ, ໂລກຕິດແສດ, ແລະ ການແທ້ງລູກ. ຜູ້ທີ່ຝ່າຝືນຕໍ່ກົດນີ້ ຈະຍອມຕໍ່ອິດທິພົນຂອງຊາຕານໄວກວ່າຄົນອື່ນ. ບາບນີ້ ກໍຍັງກະທົບກະເທືອນຕໍ່ຄົນໃນຄອບຄົວ ແລະ ຄົນອື່ນໆນຳອີກ.

## ເຮົາຈະຮັກສາກົດພົມມະຈັນໄດ້ແນວໃດ?

ພະເຈົ້າໄດ້ຮຽກຮ້ອງໃຫ້ລູກໆຂອງພະອົງນັບຖືມາດຕະຖານທີ່ສູງກວ່າ. ໃນການຮັກສາກົດພົມມະຈັນນີ້, ທ່ານຈະຕ້ອງປ່ຽນຄວາມຄິດ, ຄຳເວົ້າ, ແລະ ການກະທຳໃຫ້ດີຂຶ້ນ. ຫລັກທຳດັ່ງຕໍ່ໄປນີ້ຈະຊ່ອຍໄດ້ຫລາຍ:

*ໃຫ້ຄຸນນະທຳຂອງທ່ານປະດັບຄວາມນຶກຄິດຂອງທ່ານຢ່າງບໍ່ເສື່ອມຄາຍ ເມື່ອນັ້ນ ຄວາມໝັ້ນໃຈຂອງທ່ານຈະແຂງແກ່ນຂຶ້ນໃນການປະທັບຢູ່ຂອງພະເຈົ້າ.*

**SEE D&C 121:45**

**ຄວາມຄິດ.** ຄວາມຄິດທີ່ດີ ແລະ ເສີມສ້າງຈະຊ່ອຍກຳຈັດແນວຄິດທີ່ບໍ່ດີ ຫລື ຊົ່ວຮ້າຍອອກໄປຈາກຊີວິດຂອງທ່ານ. ເມື່ອທ່ານມີແຕ່ຄິດ ແລະ ເຮັດກິດຈະກຳໃນທາງດີ, ແລ້ວທ່ານຈະມີຄວາມສາມາດຫລາຍຂຶ້ນທີ່ຈະປ່ຽນ ແລະ ເອົາຊະນະຄວາມຄິດທີ່ບໍ່ດີນັ້ນໄດ້. ການອ່ານພະຄຳພີ, ການຮັບໃຊ້ຄອບຄົວທ່ານ, ການເຮັດວຽກງານຢ່າງພາກພຽນ, ແລະ ການຮ່ວມເຮັດກິດຈະກຳທີ່ເປັນປະໂຫຍດ ຈະຊ່ອຍທ່ານຄວບຄຸມຄວາມຄິດຂອງທ່ານໄດ້.

ໃຫ້ຫລີກເວັ້ນຈາກຮູບລາມົກໃນທຸກຮູບແບບ. ມັນເປັນເລື່ອງຕິດແສດ ແລະ ວິບັດຫລາຍແທ້ໆ. ມັນຈະເຮັດໃຫ້ທ່ານບໍ່ມີຄວາມນັບຖືຕົວເອງ ແລະ ບໍ່ເຫັນຄວາມສວຍງາມຂອງຊີວິດອີກຕໍ່ໄປ. ຢ່າປ່ອຍໃຫ້ຈິດໃຈຂອງ





ທ່ານໝົກໝຸ້ນຢູ່ກັບແນວຄິດ ຫລື ພາບທີ່ລາມົກ ແລະ ອະທຳ. ຢ່າເບິ່ງ, ອ່ານ, ຫລື ຟັງສິ່ງໃດທີ່ສະແດງ ຫລື ບັນຍາຍກ່ຽວກັບຮ່າງກາຍຂອງຄົນ ຫລື ການຮ່ວມເພດໃນທາງທີ່ບໍ່ນັບຖື. ໃຫ້ຫລີກເວັ້ນຈາກການເບິ່ງຄົນອື່ນດ້ວຍແນວຄິດທີ່ເຕັມໄປດ້ວຍຕັນຫາ, ແລະ ໃຫ້ຫລີກເວັ້ນຈາກໜັງ, ລາຍການໃນໂທລະທັດ, ອິນເຕີແນັດ, ເພງ, ປຶ້ມ, ວາລະສານ, ແລະ ກິດຈະກຳທີ່ຊັກຊວນໃຫ້ນຶກເຖິງເລື່ອງການມະລົມ ແລະ ລາມົກ.

**ຄຳເວົ້າ.** ຈົ່ງໃຫ້ຄຳເວົ້າຂອງທ່ານເປັນສິ່ງເສີມສ້າງ ແລະ ເປັນກຳລັງໃຫ້ແກ່ຄົນອື່ນ. ຈົ່ງຫລີກເວັ້ນຈາກການກ່າວຄຳທີ່ລົດກຽດ, ຫຍາບຄາຍ, ແລະ ກ່າວກ່ຽວກັບການຮ່ວມເພດແບບບໍ່ມີຢາງອາຍ ຫລື ຕະຫລົກຫລິ້ນໃນການສົນທະນາຂອງທ່ານ.

**ການກະທຳ.** ຈົ່ງເຮັດກັບຄົນອື່ນດ້ວຍຄວາມນັບຖືສະເໝີ. ຈົ່ງເປັນຄົນສຸພາບຮຽບຮ້ອຍໃນການນຸ່ງຖື. ຖ້າທ່ານຈື່ວ່າ ແຕ່ລະຄົນກໍເປັນລູກຂອງພະເຈົ້າ, ແລະ ທ່ານໄດ້ເຮັດຈົນສຸດຄວາມສາມາດຂອງທ່ານແລ້ວ ເພື່ອຊ່ອຍຄົນອື່ນ ໃຫ້ເຮັດຕາມແຜນຂອງພະອົງ, ແລ້ວທ່ານຈະໄດ້ຮັບຄວາມເຂັ້ມແຂງໃຫ້ແກ່ຄວາມປາດຖະໜາຂອງທ່ານເພື່ອຈະໄດ້ຮັກສາກົດພົມມະຈັນນີ້.

ຈົ່ງເອົາໃຈໃສ່ໃນຕອນນີ້ເພື່ອທ່ານຈະບໍ່ໄດ້ເຮັດສິ່ງໃດນອກການແຕ່ງງານເພື່ອປຸກຄວາມຮູ້ສຶກນັ້ນ ເຊິ່ງຈະຕ້ອງສະແດງພຽງແຕ່ໃນການແຕ່ງງານເທົ່ານັ້ນ. ຢ່າປຸກຄວາມຮູ້ສຶກເຫລົ່ານັ້ນກັບຄົນອື່ນ ຫລື ກັບຕົວເອງ. ຢ່າມີສ່ວນຮ່ວມໃນການຮ່ວມເພດກັບຄົນເພດດຽວກັນ ຫລື ກິດຈະກຳໃດໆທີ່ອະທຳ. ໃຫ້ເອົາກິດຈະກຳທີ່ເສີມສ້າງ ແລະ ວຽກທີ່ເຮັດໃນເວລາຫວ່າງມາເຮັດແທນກິດຈະກຳອັນທີ່ອາດຝ່າຝືນຕໍ່ກົດພົມມະຈັນ. ເມື່ອແຕ່ງງານແລ້ວ, ໃຫ້ຊື່ສັດສຸດຈະລິດຕໍ່ຄູ່ຄອງຂອງທ່ານ ທັງໃນຄວາມຄິດ ແລະ ການກະທຳ.

ເພາະວ່າການດຳລົງຊີວິດຕາມກົດພົມມະຈັນຈະນຳທ່ານໃຫ້ເຂົ້າໃກ້ຊິດກັບພະເຈົ້າຫລາຍຂຶ້ນ, ສະນັ້ນ ຊາຕານຈະພະຍາຍາມລໍ້ລວງທ່ານໃຫ້ຝ່າຝືນພະບັນຍັດນີ້. ຊາຕານຮູ້ເຖິງຕອນທ່ານເປົ່າປ່ຽວດຽວດາຍ, ສັບສົນໃນຈິດໃຈ, ຫລື ໂສກເສົ້າເຫງົາຫງອຍ, ແລະ ມັນຈະລໍ້ລວງທ່ານ ຕອນທ່ານອ່ອນແອ. ຈົ່ງອະທິຖານຫາພະບິດາເທິງສະຫວັນຂອງທ່ານເພື່ອຂໍຄວາມຊ່ອຍເຫລືອ, ແລ້ວພະອົງຈະມອບພະລັງໃຫ້ທ່ານ ເພື່ອຕ້ານທານກັບການລໍ້ລວງນັ້ນ (ເບິ່ງ 1 ໂກລິນໂທ 10:13). ເມື່ອທ່ານເພິ່ງພາພະອົງ ແລະ ເຮັດຕາມຫລັກທຳເຫລົ່ານີ້, ແລ້ວທ່ານຈະສາມາດເອົາຊະນະການລໍ້ລວງໄດ້.

## ພອນແຫ່ງການດຳລົງຊີວິດຕາມກົດພົມມະຈັນ

ເມື່ອທ່ານດຳລົງຊີວິດຕາມກົດພົມມະຈັນ, ທ່ານຈະເປີດຮັບອິດທິພົນຂອງພະວິນຍານບໍລິສຸດຫລາຍຂຶ້ນ. ດ້ວຍການຊີ້ນຳຂອງພະວິນຍານບໍລິສຸດ, ທ່ານຈະມີສະຕິປັນຍາຫລາຍຂຶ້ນ, ຈະສາມາດປະເຊີນກັບບັນຫາດ້ວຍຄວາມກ້າຫານຫລາຍກວ່າເກົ່າ, ຈະຮູ້ສຶກເຖິງການສະໜັບສະໜູນ ແລະ ການຊີ້ນຳຂອງພະເຈົ້າໃນຊີວິດຂອງທ່ານຫລາຍຂຶ້ນ, ແລະ ທ່ານຈະເປັນຕົວຢ່າງທີ່ດີໃຫ້ແກ່ຄອບຄົວຂອງທ່ານ ແລະ ຄົນອື່ນໆ. ຄວາມຮັກທີ່ທ່ານມີຕໍ່ຄູ່ຄອງຂອງທ່ານ ແລະ ຄົນທີ່ທ່ານຮັກ ຈະເລິກຊຶ້ງ, ມາກມາຍ, ແລະ ມີຄວາມໝາຍຫລາຍຂຶ້ນ. ທ່ານຈະມີຄວາມສະຫງົບອັນຍິ່ງໃຫຍ່ຢູ່ໃນຈິດໃຈ.

ຢູ່ໃນພະຄຳພີ ເຮົາໄດ້ຮຽນຮູ້ວ່າ ຄວາມສຸກທີ່ແທ້ຈິງມາຈາກການເຊື່ອຟັງຕໍ່ພະບັນຍັດຂອງພະເຈົ້າ (ເບິ່ງ ໂມໄຊຢາ 2:41) ແລະວ່າ "ຄວາມຊົ່ວຮ້າຍບໍ່ເຄີຍເປັນຄວາມສຸກເລີຍ" (ແອລະມາ 41:10).



ບໍ່ວ່າທ່ານຈະໄດ້ເຮັດຫຍັງຜ່ານມາໃນອາດີດ, ແຕ່ທ່ານຈະໄດ້ຮັບພອນ ຖ້າທ່ານເລີ່ມຕົ້ນໃນຕອນນີ້ທີ່ຈະດຳລົງຊີວິດຕາມກົດພິມມະຈັນ.

ຖ້າທ່ານໄດ້ຝ່າຝືນກົດພິມມະຈັນແລ້ວ, ພະເຈົ້າໄດ້ເຮັດໃຫ້ມັນເປັນໄປໄດ້ສຳລັບທ່ານທີ່ຈະກັບໃຈ ແລະ ກາຍເປັນຄົນສະອາດຄືນອີກ. ຈົ່ງກັບໃຈຈາກການລະເມີດທີ່ຜ່ານມາໃນຕອນນີ້, ແລະ ສັນຍາທີ່ຈະດຳລົງຊີວິດຕາມກົດທີ່ສັກສິດຂໍ້ນີ້. ຜ່ານການຊົດໃຊ້ຂອງພະເຢຊູຄຣິດ ແລະ ການກັບໃຈທີ່ແທ້ຈິງ, ທ່ານຈະສາມາດໄດ້ຮັບການໃຫ້ອະໄພ ແລະ ຄວາມສະຫງົບ.

# ການສຶກສາເພີ່ມເຕີມ

ຄຳຖາມ ແລະ ຂໍ້ພະຄຳພີດັ່ງຕໍ່ໄປນີ້ຈະຊ່ອຍທ່ານຮຽນຮູ້ຕື່ມອີກກ່ຽວກັບຫລັກທຳຢູ່ໃນປື້ມນ້ອຍນີ້. ໝາຍເຫດ ຢູ່ທາງລຸ່ມໜ້າປື້ມ ແລະ ຂໍ້ອ້າງອີງທີ່ເບິ່ງໃສ່ກັນຢູ່ໃນພະຄຳພີຈະຊີ້ບອກວ່າ ມີຂໍ້ໃດແດ່ທີ່ກ່ຽວພັນກັບຫລັກທຳເຫລົ່ານີ້.

## ການຮັກສາກົດພົມມະຈັນໝາຍຄວາມວ່າແນວໃດ? ເປັນຫຍັງກົດນີ້ຈຶ່ງສຳຄັນຫລາຍແທ້?

ອົບພະຍົບ 20:14 (ພະຄຳພີໄບເບິ້ນ, ພະຄຳພີເດີມ)

ສຸພາສິດ 6:27–32 (ພະຄຳພີໄບເບິ້ນ, ພະຄຳພີເດີມ)

ຕີໂຕ 2:11–12 (ພະຄຳພີໄບເບິ້ນ, ພະຄຳພີໃໝ່)

ແອວລະມາ 39:3–5 (ພະຄຳພີມໍມອນ, ໜ້າທີ 96)

3 ນີໄຟ 12:27–30 (ພະຄຳພີມໍມອນ, ໜ້າທີ 125; ເບິ່ງ ມັດທາ 5:27–30 ຢູ່ໃນພະຄຳພີໃໝ່ນຳອີກ)

"ຄອບຄົວ: ການປະກາດຕໍ່ໂລກ" (ຜູ້ສອນສາດສະໜາ ຫລື ສະມາຊິກຂອງສາດສະໜາຈັກສາມາດຊ່ອຍຫາໃບປະກາດນີ້ມາໃຫ້ທ່ານໄດ້ພ້ອມທັງປື້ມ *ຈົງຕໍ່ສັດທາ* ແລະ ປື້ມ *ເພື່ອຄວາມເຂັ້ມແຂງຂອງຊາວໜຸ່ມ*, ທີ່ບົ່ງໄວ້ຢູ່ຂ້າງລຸ່ມນີ້. ພ້ອມນີ້ທ່ານກໍສາມາດເປີດເບິ່ງມັນໄດ້ທີ່ **www.mormon.org.)**

"ພົມມະຈັນ," *ຈົງຕໍ່ສັດທາ*

## ເຮົາຈະມີພະລັງທີ່ເຮົາຕ້ອງການເພື່ອຮັກສາກົດພົມມະຈັນໄດ້ແນວໃດ?

1 ໂກລິນໂທ 10:13 (ພະຄຳພີໄບເບິ້ນ, ພະຄຳພີໃໝ່)

ໂມໄຊຢາ 4:29–30 (ພະຄຳພີມໍມອນ, ໜ້າທີ 68)

ແອວລະມາ 38:12 (Book of Mormon, page 305)

ປື້ມ *ສຳລັບຄວາມເຂັ້ມແຂງຂອງຊາວໜຸ່ມ*



# ເຮົາຄວນເຮັດແນວໃດ?

- ດຳເນີນການອ່ານພະຄຳພີມໍມອນຕໍ່ໄປ.
  ແນະນຳໃຫ້ອ່ານ: ____________________
  ____________________
- ຮັກສາກົດພົມມະຈັນ. ອະທິຖານເພື່ອຂໍຄວາມຊ່ອຍເຫລືອໃນການຮັກສາພະບັນຍັດຂໍ້ນີ້.
- ໄປໂບດວັນອາທິດນີ້.
- ຕຽມຕໍ່ໄປສຳລັບການຮັບບັບຕິດສະມາ.
  ວັນທີຮັບບັບຕິດສະມາ: ____________________
- ໃຫ້ເບິ່ງໃນ www.mormon.org ເພື່ອຮຽນຮູ້ກ່ຽວກັບສາດສະໜາຈັກຂອງພະເຢຊູຄຣິດແຫ່ງສິດທິຊົນຍຸກສຸດທ້າຍຕື່ມອີກ.
- ພົບກັບຜູ້ສອນສາດສະໜາຕໍ່ໄປເພື່ອຮຽນຮູ້ກ່ຽວກັບການຟື້ນຟູພະກິດຕິຄຸນຕື່ມອີກ.

ການນັດໝາຍເທື່ອຕໍ່ໄປ: ____________________

ຊື່ ແລະ ເລກໂທລະສັບຂອງຜູ້ສອນສາດສະໜາ:

____________________

____________________

____________________


ສາດສະໜາຈັກຂອງ
**ພຣະເຢຊູຄຣິດ**
ແຫ່ງໄພ່ພົນຍຸກສຸດທ້າຍ

**www.mormon.org**

**ຜູ້ແຕ້ມຮູບພາບ**
ໜ້າປົກ, ແຕ້ມຈາກ *ຈົ່ງຟັງເພິ່ນ,* ໂດຍ ຊາຍມັນ ດູວີ. © ຊາຍມັນ ດູວີ
ໜ້າທີ 6, *ພະຜູ້ຊ່ອຍໃຫ້ລອດ,* ໂດຍ ແດວ ພາເສິນ. © ແດວ ພາເສິນ
ໜ້າທີ 5 ໂດຍ Wei-Siang Wang. © Wei-Siang Wang
ໜ້າທີ 9 ໂດຍ Hyun-Gyu Lee. © Hyun-Gyu Lee
ໜ້າທ 13 ໂດຍ Tokio Onogi. © Tokio Onogi



© 2007 ໂດຍ Intellectual Reserve, Inc. ສະຫງວນລິຂະສິດທຸກປະການ. ຈັດພິມໃນສະຫະລັດອາເມລິກາ.


ສະບັບເປັນພາສາອັງກິດໄດ້ຮັບອະນຸຍາດ: 2/06. ການແປໄດ້ຮັບອະນຸຍາດ: 2/06. ແປຈາກ *Chastity*. Laotian. 01147 331

LAO
4 02011 47331 4
01147 331